# ໂຮງຮຽນວັນອາທິດ

## ວັນອາທິດ ທີ 5 ມີນາ 2017 (03-05-2017 )

## ພຣະເຢຊູຄືຊັຍຊະນະຂອງເຮົາ

ແມ່ນຫຍັງທີ່ທ່ານມັກນິຍົມໃຊ້ໃນການສເລີມສລອງສິ່ງທີ່ຍິ່ງໃຫຍ່ຂອງທ່ານ?

**ຈຸດສຳຄັນໃນບົດຮຽນ**: ພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າທີ່ມີຊັຍຊະນະຕໍ່ທຸກໆສິ່ງ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຂ້າພະເຈົ້າມີນິສັຍແປກຢ່າງນຶ່ງ: ກ່ອນອື່ນໝົດຂ້າພະເຈົ້າມັກຈະອ່ານບົດສລຸບສຸດທ້າຍຂອງປຶ້ມຢູ່ສເມີ. ຖ້າມັນມີຄວາມຕື່ນເຕັ້ນ, ຂ້າພະເຈົ້າຕ້ອງການຢາກຮູ້ຢາກເຫັນ " ນິຍາຍເຣື່ອງນັກສືບ." ຖ້າມັນເປັນເຣື່ອງສຍອງຂວັນ, ຂ້າພະເຈົ້າຕ້ອງການຢາກເຫັນຕອນຈົບໃນທັນທີທັນໃດໂລດ. ຖ້ານັກຂຽນເລີ້ມອ້າງເຫດອ້າງຜົນ ຂ້າພະເຈົ້າຍິ່ງຢາກອ່ານບົດສລຸບຂອງລາວ. ເມື່ອຂ້າພະເຈົ້າຮູ້ບົດສລຸບ ຂ້າພະເຈົ້າກໍດີໃຈກັບການອ່ານປຶ້ມຫຼາຍຂຶ້ນ.

ປາກົດການໃນປຶ້ມພຣະທັມພຣະນິມິດກໍມີຂໍ້ສເນີທີ່ຄ້າຍຄືກັນ. ເທິງເກາະປັດໂມ ອັຄສາວົກໂຢຮັນເຫັນນິມິດທີ່ບໍ່ໜ້າເຊື່ອວ່າຈະກາຍມາເປັນປຶ້ມພຣະຄັມພີພຣະນິມິດ. ປຶ້ມນີ້ເປັນປຶ້ມສຸດທ້າຍຂອງພຣະຄັມພີທີ່ສຳແດງເຣື່ອງລາວທີ່ໜ້າເກງຂາມແລະຮູບພາບທີ່ຮຸ່ງເຮືອງ ຮູບພາບແຫ່ງຊັຍຊະນະຂອງພຣະຄຣິດ.

ໃນນິມິດຂອງອະນາຄົດນີ້ ພຣະຄຣິດຊົງສຳແດງຊັຍຊະນະໃນທຸກໆດ້ານ, ຕັ້ງແຕ່ປະວັດສາດຈົນຮອດເວລາທີ່ທຸກຫົວເຂົ່າຂາບລົງ ແລະທຸກລີ້ນຍອມຮັບວ່າພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າ ເປັນສະງ່າຣາສີຂອງພຣະເຈົ້າພຣະບິດາ. ອີກຄຳເວົ້ານຶ່ງ, ພວກເຮົາຮູ້ວ່າເຣື່ອງລາວໄດ້ຈົບລົງຢ່າງໃດ. ດັ່ງນັ້ນ, ພວກເຮົາສາມາດດຳເນີນຊີວິດຂອງເຮົາໃນການຈົດຈໍ່ແລະສົມບູນແບບຫຼາຍຂຶ້ນ. ພວກເຮົາສາມາດດຳລົງຊີວິດດ້ວຍຄວາມເຊື່ອໝັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### <u>ສຶກສາພຣະຄັມພີ</u>

### 1. <u>ພຣະນິມິດ 1:12-16.</u>

*12ຂ້າພະເຈົ້າຈຶ່ງຫລຽວຫລັງເບິ່ງທາງພຣະສຸຣະສຽງທີ່ຊົງກ່າວແກ່ຂ້າພະເຈົ້ານັ້ນ ຄັນແລ້ວຂ້າພະເຈົ້າກໍເຫັນເຄື່ອງຮອງ*
*ຕີນໂຄມທອງຄຳເຈັດອັນ. 13ແລະໃນຖ້າມກາງເຄື່ອງຮອງຕີນໂຄມເຫລົ່ານັ້ນມີຜູ້ນຶ່ງເໝືອນບຸດມະນຸດ ຊົງສວມເຄື່ອງ*
*ສລອງກວມພຣະບາດ ແລະຊົງຮັດສາຍປະຄົດທອງຄຳທີ່ພຣະອຸຣະຂອງພຣະອົງ. 14ພຣະສຽນແລະພຣະເກສາຂອງ*
*ພຣະອົງຂາວເໝືອນຂົນແກະສີຂາວແລະເໝືອນດັ່ງຫິມະ ພຣະເນດຂອງພຣະອົງເໝືອນດັ່ງແປວໄຟ.15ພຣະບາດຂອງ*
*ພຣະອົງເໝືອນດັ່ງທອງເຫລືອງກ້ຽງ ເໝືອນກັບວ່າໄດ້ຫລອມໃຫ້ບໍຣິສຸດແລ້ວ ພຣະສຸຣະສຽງຂອງພຣະອົງເໝືອນສຽງ*
*ນ້ຳມາກ. 16ພຣະຫັດກ້ຳຂວາຂອງພຣະອົງຊົງຖືດາວເຈັດດວງ ມີພຣະແສງສອງຄົມອອກມາຈາກພຣະໂອດ ແລະພຣະ*
*ພັກຂອງພຣະອົງເໝືອນດັ່ງດວງອາທິດທີ່ສ່ອງແສງກ້າ.*

ປື້ມພຣະທັມພຣະນິມິດໄດ້ຂຽນຂຶ້ນໃນຂະນະເວລາທີ່ຄຣິສຕະຈັກເລີ້ມແລກປະສົບກັບການຖືກລົງໂທດ. ຕໍ່ການທົນທຸກຕໍ່ຄວາມທຸກຍາກລຳບາກນີ້, ໂຢຮັນຕ້ອງການໃຫ້ແນ່ໃຈວ່າຄຣິສຕຽນສມັຍເລີ້ມແລກບໍ່ສູນເສັຽຄວາມໝັ້ນໃຈໃນຄວາມໄວ້ວາງໃຈຂ່າວປະເສີດເຣື່ອງພຣະເຢຊູ. ແນ່ນອນ, ພຣະຄັມພີໄດ້ບອກພວກເຮົາໃຫ້ຮູ້ວ່າພຣະຄຣິດສະເດັດມາ, ພຣະອົງດຳລົງຊີວິດຢູ່ຖ້າມກາງເຮົາໂດຍບໍ່ມີບາບ, ພຣະອົງວາຍພຣະຊົນເພື່ອເຮົາ, ແລະພຣະອົງໄດ້ຄືນພຣະຊົນ, ແຕ່ຫຼາຍກວ່ານັ້ນ! ເຊັ່ນດຽວນີ້ພຣະຄຣິດຊົງປົກຄອງຣາຊອານາຈັກຂອງພຣະເຈົ້າຕລອດໄປ.

ເມື່ອໂຢຮັນນະມັສການຢູ່ນັ້ນ, ທ່ານຖືກຍົກຂຶ້ນສູງເພື່ອຈະໄດ້ເຫັນຂອບເຂດຂອງເວລາແລະຄວາມຮຸ່ງເຮືອງຂອງຜູ້ປົກຄອງທີ່ຢູ່ເໜືອປະວັດສາດ. ແລະສິ່ງທີ່ທ່ານເຫັນນັ້ນແມ່ນນິມິດທີ່ອັສຈັນຂອງພຣະຄຣິດ.

- **ພຣະອົງຊົງສວມເຄື່ອງສລອງຮັດດ້ວຍສາຍປະຄົດທອງຄຳ.** ແຕ່ຜູ້ປົກຄອງແລະຜູ້ນຳສາສນາຢິວຊັ້ນສູງສວມໃສ່ເສື້ອຄຸມຍາວ. ສາຍແອວຄຳສະແດງເຖິງຄວາມຮັ່ງມີຂອງພວກເຂົາ.
- **ພຣະເກສາຂອງພຣະອົງຂາວເໝືອນຂົນແກະແລະຂາວເໝືອນຫິມະ.** ຜົມຂາວແມ່ນຊີ້ໃຫ້ເຫັນຄວາມໂຄຣົບ, ກຽດ, ແລະຊື່ສຽງ. ເປັນເຄື່ອງໝາຍປະສົບປະການແລະຄວາມຮູ້( ສຸພາສິດ 16: 31).
- **ພຣະເນດຂອງພຣະອົງເໝືອນດັ່ງແປວໄຟ.** ນີ້ແມ່ນເນັ້ນໃຫ້ເຫັນເຖິງນິມິດໝາຍທີ່ສລາດຫຼັກແຫຼມຂອງພຣະຄຣິດແລະຄວາມສາມາດໃນການຕັດສິນຢ່າງຖືກຕ້ອງເປັນທັມຂອງພຣະອົງ..
- **ພຣະບາດຂອງພຣະອົງເໝືອນທອງເຫຼືອງກັ້ງ.** ແມ່ນເນັ້ນເຖິງຄວາມບໍຣິສຸດຂອງພຣະອົງ, ຄວາມມີພລັງອຳນາດ, ແລະສະງ່າຣາສີ..
- **ພຣະສຸຣະສຽງຂອງພຣະອົງເໝືອນສຽງນ້ຳມາກ.** ເມື່ອພຣະຄຣິດເວົ້າ, ມີຄວາມຮູ້ສຶກວ່າພຣະຄຳຂອງພຣະອົງເມື່ອໄດ້ຍິນແລ້ວຢາກໄດ້ຍິນອີກ. ເໝືອນສຽງນ້ຳຕົກຕາດທີ່ສັ່ນສະເທືອນຫົວໃຈທ່ານເມື່ອທ່ານຢືນຢູ່ໃກ້.
- **ພຣະຫັດກ້ຳຂວາຂອງພຣະອົງຖືດາວເຈັດດວງ.** ມືຂວາບົ່ງບອກເຖິງຣິດອຳນາດແລະຣິດທານຸພາບ( ເພງສັຣເສີນ 110: 1; ມັດທາຍ 26: 64 ).ແລະດາວເຈັດດວງແມ່ນ “ທູດຂອງພຣະເຈົ້າໃນຄຣິສຕະຈັກທັງເຈັດ” ( ພຣະນິມິດ 1: 20) ພຣະຄຣິດມີຊັຍໃນການດູແລຄຣິສຕະຈັກ.
- **ພຣະອົງມີພຣະແສງສອງຄົມອອກມາຈາດພຣະໂອດຂອງພຣະອົງ.** ເຖິງແມ່ນວ່າມທຸກວັນນີ້, ພວກເຮົາຍັງມັກຈະອ້າງອີງເຖິງ “ຜູ້ພິພາກສາ.” ໃນນີ້ພຽງແຕ່ເປັນຮູບພາບຂອງຣິດອຳນາດໃນການຕັດສິນຂອງພຣະຄຣິດ.
- **ພຣະພັກຂອງພຣະອົງເໝືອນດັ່ງດວງອາທິດທີ່ສອງແສງກ້າ.** ນີ້ອາດເປັນການເຕືອນສະຕິແກ່ໂຢຮັນທີ່ໄດ້ເຫັນພຣະເຢຊູເມື່ອພຣະອົງປ່ຽນແປງພຣະກາຍ( ມັດທາຍ 17:2 ) ພຣະສະງ່າຣາສີຂອງພຣະອົງເປັນທີ່ຊັດແຈ້ງ.

**2. <u>ພຣະນິມິດ 1:17-18</u>**

*17 ເມື່ອຂ້າພະເຈົ້າໄດ້ເຫັນພຣະອົງ ຂ້າພະເຈົ້າກົ້ມລົງແທບພຣະບາດຂອງພຣະອົງ ເໝືອນດັ່ງຄົນທີ່ຕາຍແລ້ວ ແຕ່ພຣະອົງຊົງຢຽດພຣະຫັດກ້ຳຂວາບາຍຂ້າພະເຈົ້າ ແລ້ວຊົງກ່າວວ່າ, “ຢ່າຊູ່ຢ້ານ ຝ່າຍເຮົາເປັນຜູ້ຕົ້ນແລະເປັນຜູ້ປ່າຍ. 18 ແລະເປັນຜູ້ມີຊີວິດຢູ່ ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ.*

ໂຢຮັນກໍເປັນມະນຸດຄືພວກເຮົາ, ເພິ່ນບໍ່ສາມາດທີ່ຈະເຂົ້າໃຈເຖິງນິມິດທີ່ເກີດຂຶ້ນຕໍ່ໜ້າເພິ່ນ, ແລະເພິ່ນ “ໄດ້ກົ້ມຫົວລົງແທບພຣະບາດຂອງພຣະອົງເໝືອນດັ່ງຄົນທີ່ຕາຍແລ້ວ.”

ນີ້ບໍ່ແມ່ນເທື່ອທຳອິດທີ່ໂຢຮັນມີປະສົບການໃນການເຫັນແບບນີ້. ໃນເຫດການທີ່, ທ່ານເອງກັບເປໂຕແລະຢາໂກໂບເຫັນພຣະເຢຊູປ່ຽນແປງພຣະກາຍເຂົ້າໄປໃນສະງ່າຣາສີຂອງພຣະອົງຕໍ່ໜ້າພວກເຂົາ ແລະພວກເຂົາມີປະຕິກິຣິຍາຕອບສນອງໃນເວລານັ້ນຢ່າງດຽວກັບການກະທຳຂອງໂຢຮັນໃນປຶ້ມພຣະນິມິດ " ພວກເຂົາກົ້ມໜ້າຂາບລົງແລະຢ້ານຫຼາຍ" ( ມັດທາຍ 17:6 ).

ຂ້າພະເຈົ້າມັກການຕອບຮັບຂອງພຣະເຢຊູໃນສອງເຫດການ. ມັດທາຍ17:7 ພຣະເຢຊູສອນເຂົາ ແລະກ່າວວ່າ "ຈົ່ງລຸກຂຶ້ນຢ່າຊູ່ຢ້ານ. ໃນພຣະນິມິດ 1:17 "ພຣະອົງຊົງຢຽດພຣະຫັດກ້ຳຂວາຂອງພຣະອົງບາຍຂ້າພະເຈົ້າ ແລ້ວຊົງກ່າວວ່າ, ຢ່າຊູ່ຢ້ານ!"

ເພາະດ້ວຍສິ່ງທີ່ພຣະເຢຊູໄດ້ຊົງກະທຳເພື່ອເຮົາ, ພວກເຮົາບໍ່ຕ້ອງຢ້ານ. ພຣະເຢຊູໄດ້ຊົງປະກາດພຣະອົງເອງ " ພຣະອົງຊົງເປັນພຣະເຈົ້າອົງພຣະຊົນຢູ່." ພຣະອົງຊົງວາຍພຣະຊົນແທນເຮົາ. ພຣະອົງເລືອກທີ່ຈະຍອມຮັບໂທດບາບຂອງເຮົາ ພຣະເຢຊູບໍ່ໄດ້ຈົມຢູ່ໃນຄວາມຕາຍ. ພຣະເຈົ້າພຣະບິດາພຣະອົງໄດ້ປະທັບຕາຍອມຮັບສິ່ງທີ່ພຣະເຢຊູໄດ້ຊົງກະທຳດ້ວຍການຊົງບັນດານໃຫ້ພຣະເຢຊູຄືນຂຶ້ນມາຈາກຕາຍ. ດຽວນີ້ພຣະເຢຊູຊົງພຣະຊົນຢູ່, ບໍ່ເຄີຍຕາຍອີກ.

- " ພຣະຄຣິສຕາຍແລະຄືນຂຶ້ນມາຈາກຕາຍສູ່ຊີວິດເພື່ອສິ່ງນີ້: ເພື່ອພຣະອົງຈະຊົງເປັນອົງພຣະຜູ້ເປັນເຈົ້າທັງຄົນເປັນແລະຄົນຕາຍ" ( ໂຣມ 14:9 ).
- ຊຶ່ງພຣະອົງໄດ້ຊົງກະທຳໃນອົງພຣະຄຣິດເມື່ອຊົງບັນດານໃຫ້ພຣະອົງຄືນພຣະຊົນ ແລະຊົງໃຫ້ປະທັບເບື້ອງຂວາພຣະຫັດຂອງພຣະເຈົ້າໃນສວັນສະຖານ ສູງກວ່າບັນດາຜູ້ປົກຄອງ, ຜູ້ມີອຳນາດ, ຜູ້ມີຣິດເດດ, ຜູ້ມີອານຸພາບ ແລະເໜືອກວ່ານາມຊື່ທັງປວງທີ່ເອີ່ຍມາ ບໍ່ແມ່ນໃນສມັຍນີ້ເທົ່ານັ້ນ ແຕ່ໃນສມັຍທີ່ຈະມາເຖິງນີ້ດ້ວຍ. ແລະພຣະເຈົ້າໄດ້ຊົງປາບສິ່ງສາຣະພັດທັງປວງລົງໃຕ້ພຣະບາດຂອງພຣະຄຣິດ ແລະໄດ້ຊົງຕັ້ງພຣະອົງໄວ້ໃຫ້ເປັນພຣະປະມຸກເໜືອສິ່ງສາຣະພັດແກ່ຄຣິສຕະຈັກ." (ເອເຟໂຊ1: 20- 21).

ພວກເຮົາບໍ່ຕ້ອງຢ້ານຄວາມຕາຍ ເພາະພຣະຄຣິດເອົາຊະນະຄວາມຕາຍເພື່ອເຮົາຊຶ່ງເປັນຄຣິສຣະຈັກຂອງພຣະອົງ, ການຕາຍຂອງພຣະອົງແມ່ນເພື່ອເຮົາແລະການເປັນຄືນມາຈາກຕາຍກໍເພື່ອເຮົາ.

ຈົ່ງຄິດເບິ່ງວ່າການລົງໂທດຄຣິສຕະຈັກມີຄວາມໝາຍຢ່າງໃດກ່ຽວກັບອຳນາດການປົກຄອງໂຣມ ທີ່ໄດ້ບອກຄຣິສຕຽນທັນທີທີ່ຊີຊາເປັນກະສັດແລະຄອງຣາດເໝືອນດັ່ງເປັນພຣະເຈົ້າເອງ. ຕໍ່ຊາວໂຣມ, ພຣະເຢຊູເປັນພຽງຜູ້ປະກາດພຣະທັມທີ່ຕ້ອງຕາຍແລະອີກບໍ່ດົນກໍຈະຖືກລືມ. ແຕ່ຕອນນີ້ໂຢຮັນໄດ້ນຳເອົາຂ່າວການເປັນຄືນຂຶ້ນມາຈາກຕາຍຂອງພຣະຄຣິດແລະທັງໝົດນັ້ນເປັນການວາງເງື່ອນໄຂໄວ້ວ່າ: ພຣະເຢຊູ, ຜູ້ມີອຳນາດເອີ້ນເອົາມະນຸດຊາດເຂົ້າສູ່ຊີວິດແລະຜູ້ມີຣິດອຳນາດທີ່ຈະໄຖ່ເອົາໂລກທີ່ແຕກສລາຍຂອງເຮົາໄວ້ໃນວັນນຶ່ງ, ໃຫ້ມີຊີວິດຢູ່ແລະມີສະງ່າຣາສີສູງສຸດ.

## 3 <u>ພຣະນິມິດ 1:19-20</u>

*19 ເຫດສັນນີ້ຈົ່ງຂຽນເຫດການທັງຫລາຍທີ່ເຈົ້າໄດ້ເຫັນ ຄືເຫດການທີ່ເປັນຢູ່ດຽວນີ້ ກັບທັງເຫດການທີ່ຈະເກີດຂຶ້ນໃນພາຍໜ້າເໝືອນກັນ. 20 ສ່ວນຄວາມເລິກລັບຂອງດາວທັງເຈັດນັ້ນ ກໍຄືດາວເຈັດດວງນັ້ນໄດ້ແກ່ທູດຂອງພຣະເຈົ້າໃນຄຣິສຕະຈັກທັງເຈັດ ແລະເຄື່ອງຮອງຕີນໂຄມທັງເຈັດນັ້ນໄດ້ແກ່ຄຣິສຕະຈັກທັງເຈັດ.*

ໂຢຮັນໄດ້ຮັບຄຳສັ່ງໃຫ້ຂຽນເຖິງຄຣິສຕະຈັກທັງເຈັດທີ່ເປັນສັນຍາລັກຂອງເຄື່ອງຮອງຕີນໂຄມທອງຄຳ. ໃນຄຣິສຕະຈັກທັງເຈັດກໍແມ່ນດາວທັງເຈັດທີ່ຢູ່ໃນມືເບື້ອງຂວາຂອງພຣະເຢຊູຄຣິດ; ພຣະເຢຊູເອີ້ນດາວເຫຼົ່ານີ້ວ່າ " ທູດຂອງພຣະເຈົ້າໃນເຈັດຄຣິສຕະຈັກ." ຂ້າພະເຈົ້າເຊື່ອວ່າສ່ວນຫຼາຍແມ່ນສິດຍາພິບານຂອງຄຣິສຕະຈັກ ຜູ້ນຳຜູ້ທີ່ຢູ່ພາຍໃຕ້ຄວາມກົດດັນແລະການລົງໂທດຈາກອຳນາດການປົກຄອງໂຣມໃນການພຍາຍາມກີດກັ້ນການເປັນພຍານຂອງເຂົາ.

ຢ່າເຂົ້າໃຈຜິດຄວາມຈິງຂໍ້ນີ້ທີ່ວ່າສິດຍາພິບານຂອງຄຣິສຕະຈັກໄດ້ຖືກຖືໄວ້ໃນມືຂວາຂອງພຣະເຢຊູຄຣິດ ໃນທໍານອງດຽວກັນ, ຈົ່ງຈໍາໄວ້ວ່າໂຢຮັນໄດ້ເຫັນພຣະເຢຊູກໍາລັງເດີນຢູ່ "ເທິງເຄື່ອງຮອງຕີນໂຄມ"(ຂໍ້ 13), ມີຄວາມໝາຍວ່າພຣະເຢຊູຢູ່ຖ້າມກາງຄຣິສຕະຈັຂອງພຣະອົງ. ພຣະເຢຊູເປັນແລະຍັງເປັນຜູ້ໃຫ້ການຄວບຄຸມດູແລ ໂຢຮັນໄດ້ຂຽນພຣະທັມພຣະນິມິດເພື່ອໃຫ້ຄຣິສຕະຈັກຮູ້ຈັກການປົກຄອງຂອງພຣະເຢຊູ ເພື່ອພວກເຮົາຈະດໍາລົງຊີວິດຢູ່ດ້ວຍຄວາມໝັ້ນໃຈວ່າພຣະຄຣິດເອົາຊະນະຄວາມບາບ ແລະຄວາມເໜົ່າເປື່ອຍຂອງໂລກນີ້. ຄວາມຮັກມີຊັຍຕໍ່ຄວາມກຽດຊັງ. ຄວາມດີທໍາລາຍຄວາມຊົ່ວຮ້າຍ. ສິ່ງທີ່ສໍາຄັນທີ່ສຸດ ພຣະເຢຊູຄຣິດຈະນໍາລູກຂອງພຣະອົງທັງໝົດກັບຄືນບ້ານເພື່ອຢູ່ກັບພຣະອົງ. ບໍ່ມີອໍານາດໃດໆ ທີ່ຈະແຍກເຮົາອອກຈາກພຣະອົງໄດ້ (ໂຣມ 8: 38- 39 ).

ໜ້າເສົ້າໃຈ, ຖ້າການດໍາເນີນຊີວິດທັງໝົດຂອງເຮົາຍັງດີ້ນລົນຕໍ່ສູ້ຢູ່ກັບການສົງສັຍ ວ່າພຣະເຢຊູຈະມີຊັຍຫລືບໍ່, ບາງເທື່ອພວກເຮົາບໍ່ໝັ້ນໃຈ. ຜົນຕາມມາກໍຄື ພວກເຮົາບໍ່ເຄີຍໃຫ້ຄໍາໝັ້ນສັນຍາທັງໝົດຕໍ່ພຣະຄຣິດ. ພວກເຮົາມັກປົກປ້ອງຄວາມຄາດເດົາຂອງເຮົາແລະບໍ່ເຕັມໃຈໃຫ້ຄໍາສັນຍາທັງໝົດຂອງເຮົາຕໍ່ຣາຊອານາຈັກຂອງພຣະເຈົ້າ.

ຄວາມຈໍາເປັນນັ້ນແມ່ນ ໃຫ້ພວກເຮົາຈັດຕຽມແລະເຊື່ອໝັ້ນດຽວນີ້. ພຣະເຢຊູມີຊັຍຊະນະ; ສັດຕຣູຂອງພຣະອົງໄດ້ພ່າຍແພ້. ດັ່ງນັ້ນ ຈົ່ງດໍາເນີນຊີວິດຢ່າງກ້າຫານເພື່ອພຣະຄຣິດແລະຢ່າໃຫ້ຄວາມສິ້ນຫວັງໃນພຣະຄຣິດຂົ່ມຂູ່ທ່ານອີກຕໍ່ໄປ. ພຣະເຢຊູແມ່ນຊັຍຊະນະຂອງເຮົາ, ແລະພວກເຮົາສາມາດດໍາເນີນຊີວິດດ້ວຍຄວາມຊົມຊື່ນຍິນດີດ້ວຍຄວາມເຊື່ອໝັ້ນໃນຊັຍຊະນະຂອງພຣະອົງໃນແຕ່ລະວັນ.

## ນໍາໃຊ້ໃນຊີວິດ.

**ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າແລະພຣະອົງມີຊັຍຊະນະຢ່າງຮຽບຮ້ອຍສໍາລັບອະນາຄົດຂອງທ່ານ. ຈົ່ງພິຈາຣະນາຕິດຕາມທາງເລືອກຂໍ້ສເນີນີ້ ເພື່ອຕອບສນອງຕໍ່ຄວາມຈິງທຸກໆວັນ.**

- **ຄວາມເຊື່ອໄວ້ວາງໃຈ.** ຈົ່ງພິຈາຣະນາຊີວິດຂອງທ່ານສໍາລັບການດໍາເນີນຊີວິດແຕ່ລະວັນ. ຈົ່ງເຊື່ອວາງໃຈພຣະຄຣິດວ່າຈະນໍາພາທ່ານໃນຈຸດນັ້ນ. ໄວ້ວາງໃຈໃນພຣະອົງເໝືອນເປັນອົງພຣະຜູ້ເປັນເຈົ້າ.
- **ສນັບສນູນໃຫ້ກໍາລັງໃຈ.** ຖ້າທ່ານມີເພື່ອນຜູ້ທີ່ສິ້ນຫວັງໝົດກໍາລັງໃຈເພາະສະພາບການໃດກໍຕາມ, ຈົ່ງອະທິຖານເພື່ອລາວ. ແບ່ງປັນສິ່ງທີ່ທ່ານໄດ້ຮຽນຈາກບົດຮຽນນີ້ແລະຊ່ວຍເຫຼືອລາວໃຫ້ເຫັນພຣະເຢຊູວ່າເປັນຂອງຂວັນແກ່ລາວແລະມີຣິດອໍານາດເໜືອທຸກໆສິ່ງ.
- **ຈົ່ງຢືນຂຶ້ນ.** ຈົ່ງກ້າຫານແລະເຊື່ອໝັ້ນໃນທຸກປະເດັນ ຄວາມເຊື່ອຂອງທ່ານໃນພຣະເຢຊູຄຣິດໄດ້ຖືກທ້າທາຍຫລືຖືກເຍາະເຍີ້ຍ. ເລືອກທີ່ຈະຢືນຂຶ້ນເພື່ອຊັຍຊະນະຂອງພຣະອົງບໍ່ວ່າຈະຢູ່ບ້ານ, ທີ່ທໍາງານ, ຕໍ່ເພື່ອນບ້ານແລະໃນທີ່ອື່ນໆ ອີກ.

ອັນໃດຄືຂໍ້ໄດ້ປຽບທີ່ຮູ້ຈຸດສຸດທ້າຍຂອງເຣື່ອງ! ໃນຖານະເປັນລູກສິດຂອງພຣະເຢຊູ, ພວກເຮົາສາມາດຄົ້ນເບິ່ງໃບສຸດທ້າຍຂອງປຶ້ມພຣະຄັມພີແລະຮູ້ວ່າພຣະຄຣິດຈະໄດ້ຊັຍຊະນະ ໃນພຣະອົງເຮົາມີຊັຍຊະນະແລ້ວ. ຈົ່ງເຊື່ອໝັ້ນໃນຊັຍຊະນະນັ້ນ ໃນຖານະທີ່ທ່ານເປັນຜູ້ຕິດຕາມພຣະອົງໃນແຕ່ລະວັນ.

ອຸປຖໍາໂດຍລາວຊາວເທີນບັບຕິສສັມພັນ **www.lsbf.org** ແປໂດຍ **VR**.